ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 768./ຈນວ

ວັນທີ: 25 ທັນວາ 2020

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດຂອບເຂດ ແລະ ຮັບຮອງຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ຖືສິດນຳໃຊ້ທີ່ດິນ ໃນເຂດພັດທະນາ ເນື້ອທີ່ 51,1 ເຮັກຕາ ຂອງໂຄງການທ່າບົກ ທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ (ແບບຄົບວົງຈອນ)

- ອີງຕາມ ມາດຕາທີ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ;
- ອີງຕາມ ມາດຕາ 153, 154 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ແລະ ດຳລັດເລກທີ 84/ລບ, ລົງວັນທີ 5 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 443/ຫສນຍ, ລົງວັນທີ 02 ເມສາ 2020 ກ່ຽວກັບການອະນຸຍາດໃຫ້ນະຄອນຫຼວງວຽງຈັນ ອອກນິຕິກຳ ເພື່ອຮັບໃຊ້ເຂົ້າໃນໂຄງການພັດທະນາທ່າບົກ ທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ (ແບບຄົບວົງຈອນ);
- ອີງຕາມ ສັນຍາສຳປະທານໂຄງການພັດທະນາທ່າບົກ ທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ ສະບັບລົງວັນທີ 3 ກໍລະກົດ 2020;
- ອີງຕາມ ມະຕິກອງປະຊຸມສະໄໝວິສາມັນ ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ສະບັບເລກທີ 038/ສປນວ, ລົງວັນທີ 27 ຕຸລາ 2020;
- ອີງຕາມ ໜັງສືສະເໜີຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 9828/ພຊສ, ລົງວັນທີ 06 ພະຈິກ 2020.

## ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ເພື່ອກຳນົດຂອບເຂດ, ຫົວໜ່ວຍລາຄາ, ຫຼັກການ ແລະ ວິທີການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ຖືສິດນຳໃຊ້ທີ່ດິນ ໃນເຂດພັດທະນາໂຄງການທ່າບົກ ທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ (ແບບຄົບວົງຈອນ) ຂອບເຂດເນື້ອທີ່ 51,1 ເຮັກຕາ ເຂດບ້ານດົງໂພສີ, ເມືອງຫາດຊາຍຟອງ, ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານທົດແທນຄ່າເສຍຫາຍໃຫ້ແກ່ເຈົ້າຂອງສິດນຳໃຊ້ທີ່ດິນ ໃຫ້ມີຄວາມເປັນເອກະພາບ ແລະ ມີປະສິດທິຜົນສູງ.

### ມາດຕາ 2 ເປົ້າໝາຍ

ຂໍ້ຕົກລົງສະບັບນີ້ນຳໃຊ້ເປັນພື້ນຖານ ໃຫ້ແກ່ການກຳນົດຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ຖືສິດນຳໃຊ້ທີ່ດິນ ໃນເຂດພັດທະນາ ເນື້ອທີ່ 51,1 ເຮັກຕາ ຂອງໂຄງການທ່າບົກ ທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ (ແບບຄົບວົງຈອນ).

**ມາດຕາ 3 ອະທິບາຍຄໍາສັບ**

**3.1** ເຂດໂລຊິດສະຕິກນະຄອນຫຼວງວຽງຈັນ (Vientiane Logistics Park) ມີຊື່ຫຍໍ້ວ່າ (ຂລນວ) ໝາຍເຖິງ: ແມ່ນພື້ນທີ່ ທີ່ລັດໄດ້ກໍານົດກໍ່ສ້າງເປັນເຂດໂລຊິດສະຕິກຂົນສົ່ງສິນຄ້າທີ່ນະຄອນຫຼວງວຽງຈັນ ຕາມຍຸດທະສາດພັດທະນາໂລຊິດສະຕິກຂົນສົ່ງສິນຄ້າຂອງ ສປປ ລາວ ຕາມດໍາລັດ ເລກທີ່ 158/ລບ, ເປັນເຂດພັດທະນາຄົບວົງຈອນຂອງບັນດາກິດຈະກໍາທ່າບົກ, ການຂົນສົ່ງ, ໂລຊິດສະຕິກ, ການເຄື່ອນຍ້າຍສິນຄ້າ (ນໍາເຂົ້າ,ສົ່ງອອກ, ຜ່ານແດນ), ລະບົບສາງທຸກປະເພດ, ເຂດຜະລິດ ແລະ ປຸງແຕ່ງສິນຄ້າເພື່ອສົ່ງອອກຕັ້ງຢູ່ເຂດບ້ານດົງໂພສີ, ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ.

**3.2** ໂລຊິດສະຕິກ (Logistics) ໝາຍເຖິງ: ລະບົບການຄຸ້ມຄອງບໍລິຫານ ຂະບວນການເຄື່ອນຍ້າຍສິນຄ້າ ທີ່ມີການວາງແຜນ, ຄວບຄຸມ, ເກັບຮັກສາ, ຫຸ້ມຫໍ່, ຄ່ຽນຖ່າຍ, ຂົນສົ່ງ, ບໍລິການ ແລະສະໜອງຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ທີ່ມີປະສິດທິພາບ ແລະ ປະສິດທິຜົນ ຈາກຕົ້ນທາງໄປຍັງປາຍທາງ ຕາມຄວາມຕ້ອງການຂອງລູກຄ້າຢ່າງເປັນຕໍ່ອງໂສ້.

**3.3** ທ່າບົກ (Dry Port) ໝາຍເຖິງ: ສະຖານີເຊື່ອມຕໍ່ການຂົນສົ່ງ ມີທີ່ຕັ້ງຢູ່ເທິງບົກຫ່າງຈາກທະເລ, ເຊື່ອມຕໍ່ຫາທ່າເຮືອດ້ວຍໜຶ່ງ ຫຼື ຫຼາຍຮູບແບບການຂົນສົ່ງ ສໍາລັບການຄວບຄຸມ, ການເກັບຮັກສາ ແລະ ການກວດກາຄວາມຖືກຕ້ອງຂອງສິນຄ້າທີ່ເຄື່ອນຍ້າຍ ໃຫ້ສອດຄ່ອງກັບລະບົບການຄ້າສາກົນ ໂດຍເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ ແມ່ນສູນກາງຄ່ຽນຖ່າຍສິນຄ້າທີ່ສາມາດຮັບ-ສົ່ງ, ເຕົ້າໂຮມ, ແຈກຢາຍ, ຝາກສາງ, ເປີດ ແລະ ບັນຈຸເຂົ້າຕູ້ສິນຄ້າໄດ້ ຕາມເງື່ອນໄຂຂອງສັນຍາສາກົນ, ແມ່ນ ດ່ານສາກົນ ສໍາລັບການຂົນສົ່ງສິນຄ້າເຂົ້າ-ອອກ ແລະ ຜ່ານແດນ ຂອງປະເທດ.

**ມາດຕາ 4 ຂອບເຂດນໍາໃຊ້**

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ສໍາລັບການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມ, ບຸກຄົນ, ນິຕິບຸກຄົນທີ່ກ່ຽວພັນກັບການທົດແທນຄ່າເສຍຫາຍໃຫ້ຜູ້ຖືສິດນໍາໃຊ້ທີ່ດິນ ໃນເນື້ອທີ່ 51,1 ເຮັກຕາ, ຈໍານວນ 90 ຕອນດິນ, 68 ຄອບຄົວ ຢູ່ 3 ບ້ານ (ບ້ານດົງໂພສີ, ບ້ານທ່ານາແລ້ງ ແລະ ບ້ານດົງໂພນແຮ່) ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ໃນໂຄງການພັດທະນາທ່າບົກ ທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ (ແບບຄົບວົງຈອນ).

**ມາດຕາ 5 ຫຼັກການທົດແທນຄ່າເສຍຫາຍ**

ກໍານົດຫຼັກການ ໃນວິທີຄິດໄລ່ຫົວໜ່ວຍລາຄາທົດແທນ ແມ່ນອີງໃສ່ພູມສັນຖານການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ພື້ນຖານໂຄງລ່າງ ໂດຍເອົາລາຄາປະເມີນທີ່ດິນ ຕາມຂໍ້ຕົກລົງເລກທີ 352/ສນຍ.ອຄດຊ ລົງວັນທີ 31 ພຶດສະພາ 2011 ສົມທົບກັບລາຄາການຊື້-ຂາຍທີ່ດິນຕົວຈິງທີ່ມີການຢັ້ງຢືນຂອງແຕ່ລະບ້ານ ແລ້ວມາຫານໃຫ້ສອງ ຕາມດໍາລັດເລກທີ 84/ລບ, ລົງວັນທີ 5 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ ເປັນລາຄາທົດແທນ.

**ມາດຕາ 6 ລາຄາທົດແທນ**

ລາຄາທົດແທນນີ້ ແມ່ນໄດ້ດໍາເນີນຕາມຂັ້ນຕອນ ແລະ ໄດ້ຮັບການຮັບຮອງຈາກສະພາປະຊາຊົນນະຄອນຫຼວງວຽງຈັນ ແລ້ວ.

**6.1ລາຄາທົດແທນຄ່າເສຍຫາຍ ສິດນໍາໃຊ້ທີ່ດິນ:**

ລາຄາທົດແທນຄ່າເສຍຫາຍສິດນໍາໃຊ້ທີ່ດິນ ແມ່ນປະຕິບັດຕາມຕາຕະລາງການຄິດໄລ່ຂອງພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 2967/ພຊສ.ນວ, ລົງວັນທີ 17 ມີນາ 2020 ຄັດຕິດມາພ້ອມນີ້.

**6.2 ລາຄາທົດແທນຄ່າເສຍຫາຍສິ່ງປຸກສ້າງ:**

ລາຄາທົດແທນຄ່າເສຍຫາຍສິ່ງປຸກສ້າງ ແມ່ນປະຕິບັດຕາມຕາຕະລາງການຄິດໄລ່ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 1642/ຍທຂ.ນວ, ລົງວັນທີ 11 ມີນາ 2020 ຄັດຕິດມາພ້ອມນີ້.

**6.3 ລາຄາທົດແທນຄ່າເສຍຫາຍຂອງຜົນລະປູກ:**

ລາຄາທົດແທນຄ່າເສຍຫາຍຂອງຜົນລະປູກ ແມ່ນປະຕິບັດຕາມຕາຕະລາງການຄິດໄລ່ຂອງພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ສະບັບເລກທີ 1046/ກປ.ນວ, ລົງວັນທີ 10 ມີນາ 2020 ຄັດຕິດມາພ້ອມນີ້.

**ມາດຕາ 7 ແຫຼ່ງທຶນໃນການທົດແທນ**

ແຫຼ່ງທຶນໃນການທົດແທນໃຫ້ຜູ້ຖືສິດນຳໃຊ້ທີ່ດິນ ໃນພື້ນທີ່ດັ່ງກ່າວ ແມ່ນນຳໃຊ້ງົບປະມານຂອງບໍລິສັດ ສິດທິ ໂລຈິດສະຕິກລາວ ຈຳກັດ.

**ມາດຕາ 8 ວິທີທົດແທນ**

**8.1** ເຈົ້າຂອງສິດນຳໃຊ້ທີ່ດິນ ຂອງໂຄງການພັດທະນາທ່າບົກ ທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ (ແບບຄົບວົງຈອນ) ສາມາດສະເໜີຮັບຄ່າທົດແທນໄດ້ ຈາກຄະນະຮັບຜິດຊອບໂຄງການ ຂັ້ນນະຄອນຫຼວງວຽງຈັນ ໂດຍແມ່ນຄະນະປະສານງານຂັ້ນເມືອງ ເປັນຜູ້ຕິດຕາມ ແລະ ກວດກາການທົດແທນຄ່າເສຍຫາຍ, ສະຖານທີ່ພົວພັນວຽກ ແມ່ນຫ້ອງການບ້ານດົງໂພສີ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ;

**8.2** ພາຍຫຼັງທີ່ໄດ້ຮັບຮອງເອົາມູນຄ່າການທົດແທນຄ່າເສຍຫາຍ ໃຫ້ເຈົ້າຂອງສິດນຳໃຊ້ທີ່ດິນແລ້ວ ໂຄງການຈະໄດ້ໂອນເງິນຈຳນວນດັ່ງກ່າວ ເຂົ້າບັນຊີເງິນຝາກຢູ່ທະນາຄານທີ່ໂຄງການໄດ້ເປີດໃຫ້ສະເພາະ ຫຼື ບັນຊີຂອງເຈົ້າຂອງສິດນຳໃຊ້ທີ່ດິນ ຊຶ່ງການໂອນເງິນແຕ່ລະຄັ້ງ ຕ້ອງຜ່ານການກວດກາຈາກຄະນະຮັບຜິດຊອບທຸກຄັ້ງ ກ່ອນຈະມີການໂອນເຂົ້າ, ທະນາຄານທີ່ຈະໂອນໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຕ້ອງແມ່ນທະນາຄານທີ່ຢູ່ໃກ້ ຫຼື ທະນາຄານທີ່ເຈົ້າຂອງຊັບສິນມີຄວາມສະດວກທີ່ສຸດ ເພື່ອອຳນວຍຄວາມສະດວກໃນການເຄື່ອນໄຫວທາງດ້ານການເງິນ;

- ການຈ່າຍເງິນທົດແທນ ແມ່ນຈະປະຕິບັດພາຍຫຼັງທີ່ຄະນະປະສານງານຂັ້ນເມືອງ ໄດ້ປະເມີນມູນຄ່າທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ເປັນເອກະພາບກັບເຈົ້າຂອງສິດນຳໃຊ້ທີ່ດິນແລ້ວ ແລະ ໄດ້ຮັບການຮັບຮອງຢ່າງເປັນທາງການ ຈາກຄະນະຮັບຜິດຊອບຂັ້ນນະຄອນຫຼວງວຽງຈັນ.
- ໄລຍະເວລາໃນການເບີກຈ່າຍເງິນທົດແທນ ໃຫ້ເຈົ້າຂອງສິດນຳໃຊ້ທີ່ດິນ ກຳນົດເວລາ 90 ວັນລັດຖະການ ນັບແຕ່ວັນອອກຂໍ້ຕົກລົງສະບັບນີ້ ເປັນຕົ້ນໄປ.

**8.3** ການມອບ-ຮັບທີ່ດິນ ແມ່ນບົນພື້ນຖານການເປັນເອກະພາບ ແລະ ຫວ່າງເຈົ້າຂອງສິດນຳໃຊ້ທີ່ດິນ ແລະ ໂຄງການ, ເມື່ອສຳເລັດການທົດແທນໃຫ້ເຈົ້າຂອງສິດນຳໃຊ້ທີ່ດິນແລ້ວ ຈຶ່ງຈັດຕັ້ງປະຕິບັດໂຄງການໄດ້, ຫາກຕອນດິນໃດທີ່ບໍ່ມີທາງເຂົ້າ-ອອກ ບໍລິສັດ ຕ້ອງໄດ້ສ້າງທາງໃຫ້ເຈົ້າຂອງດິນມີທາງຫຼວງ.

**ມາດຕາ 9 ການແກ້ໄຂຂໍ້ຂັດແຍ່ງ**

ໃນກໍລະນີມີຂໍ້ຂັດແຍ່ງ ເຈົ້າຂອງສິດນຳໃຊ້ທີ່ດິນ ມີສິດສະເໜີແກ້ໄຂຂໍ້ຂັດແຍ່ງເຖິງຄະນະກຳມະການຂັ້ນເມືອງ ຫຼື ນະຄອນຫຼວງວຽງຈັນ ແກ້ໄຂຕາມຫຼັກການ, ລະບຽບການທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ຖ້າຫາກຍັງບໍ່ເຫັນດີນຳການແກ້ໄຂ ກໍ່ໃຫ້ປະຕິບັດຕາມມາດຕາ 23, 24 ໝວດທີ VII ການແກ້ໄຂຂໍ້ສະເໜີ

ກ່ຽວກັບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຂອງດຳລັດ ເລກທີ 84/ລບ, ລົງວັນທີ 5 ເມສາ 2016.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ມອບໃຫ້ຫົວໜ້າຄະນະຊີ້ນຳໂຄງການ, ອຳນາດການປົກຄອງເມືອງຫາດຊາຍຟອງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກຳ ແລະ ປ່າໄມ້, ພະແນກການເງິນ, ພະແນກແຜນການ ແລະ ການລົງທຶນ, ພະແນກຍຸຕິທຳ, ຄະນະກຳມະການໄກ່ເກ່ຍໂຄງການທ່າບົກ ທ່ານາແລ້ງ ແລະ ເຂດໂລຊິດສະຕິກ ນະຄອນຫຼວງວຽງຈັນ (ແບບຄົບວົງຈອນ).

ທຸກການຈັດຕັ້ງຂອງພັກ-ລັດ, ຂອງສັງຄົມທີ່ກ່ຽວຂ້ອງ ມີໜ້າທີ່ໂຄສະນາ, ປະຊາສຳພັນ ແລະ ປຸກລະດົມຜູ້ຖືກຜົນກະທົບໃຫ້ເຂົ້າໃຈ, ເຫັນດີ ແລະ ປະກອບສ່ວນເຂົ້າໃນການພັດທະນາລວມ ຂອງລັດຖະບານໃຫ້ມີຄວາມສະຫງົບ ແລະ ສຳເລັດຜົນເປັນຢ່າງດີ.

**ມາດຕາ 11** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ຈັດພິມລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ 15 ວັນ ເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ອາດສະພັງທອງ ສີພັນດອນ

<u>ບ່ອນສົ່ງ:</u>

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງ ທ່ານລະ | 01 ສະບັບ; |
| - ຫ້ອງວ່າການສູນກາງພັກ | 01 ສະບັບ; |
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ; |
| - ຫ້ອງວ່າການປະທານປະເທດ | 01 ສະບັບ; |
| - ຄະນະເລຂາທິການ ສະພາແຫ່ງຊາດ | 01 ສະບັບ; |
| - ຫ້ອງການ ອົງການກວດກາລັດຖະບານ | 01 ສະບັບ; |
| - ສະພາປະຊາຊົນ ນວ | 01 ສະບັບ; |
| - ອົງການກວດກາລັດ ນວ | 01 ສະບັບ; |
| - ກອງບັນຊາການ ປກຊ-ປກສ ນວ | 02 ສະບັບ; |
| - ຄະນະຊີ້ນຳໂຄງການ ແລະ ຄະນະກຳມະການໄກ່ເກ່ຍ ໂຄງການທ່າບົກ-ທ່ານາແລ້ງ... ທ່ານລະ | 01 ສະບັບ; |
| - ພະແນກການ ແລະ ເມືອງກ່ຽວຂ້ອງ ບ່ອນລະ | 01 ສະບັບ; |
| - ອົງການປົກຄອງບ້ານກ່ຽວຂ້ອງ ບ້ານລະ | 01 ສະບັບ; |
| - ບໍລິສັດ ລິດທີ ໂລຈິສຕິກ ລາວ ຈຳກັດ | 01 ສະບັບ; |
| - ເກັບມ້ຽນສຳເນົາ | 02 ສະບັບ. |